**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງປ້ອງກັນຄວາມສະຫງົບ
ກົມໃຫຍ່ສັນຕິບານ (502)
ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ

ເລກທີ 752 /ກຕມ
ນະຄອນຫຼວງວຽງຈັນ, ວັນທີ 17 ເມສາ 2020

# ແຈ້ງການ

ເຖິງ : - ພະແນກ ຕມ ຫ້ອງສັນຕິບານ ກອງບັນຊາການ ປກສ ນະຄອນຫຼວງ, ແຂວງ ໃນທົ່ວປະເທດ
- ດ່ານ ຕຳຫຼວດກວດຄົນເຂົ້າ-ອອກເມືອງ ສາກົນ ໃນຂອບເຂດທົ່ວປະເທດ

ເລື່ອງ: ສືບຕໍ່ຍົກລະດັບຄວາມເຂັ້ມງວດໃນການຄຸ້ມຄອງການເຂົ້າ-ອອກ ສປປ ລາວ ແລະ ໂຈະການຕໍ່ເວລາພັກເຊົາຊົ່ວຄາວ ຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ເພື່ອຕ້ານ ພະຍາດໂຄວິດ-19 (COVID-19)

- ອີງຕາມ ຄຳສັ່ງ ຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 (COVID-19);
- ອີງຕາມ ແຈ້ງການຂອງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 481/ຫສນຍ, ລົງວັນທີ 15 ເມສາ 2020 ກ່ຽວກັບການຕໍ່ເວລາ ແລະ ການແນະນຳເພີ່ມເຕີມ ໃນການຈັດຕັ້ງປະຕິບັດຄຳສັ່ງ ຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020;
- ອີງຕາມ ທິດຊີ້ນຳຂອງ ຄະນະນຳກົມໃຫຍ່ສັນຕິບານ ກໍຄືກະຊວງປ້ອງກັນຄວາມສະຫງົບ ໃນຄັ້ງວັນທີ 16 ເມສາ 2020;
- ອີງຕາມ ຂໍ້ຕົກລົງ ຂອງທ່ານ ລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 084/ປກສ, ລົງວັນທີ 03 ກຸມພາ 2010 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ.

ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ໂດຍຈັດຕັ້ງປະຕິບັດ ຕາມ ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 481/ຫສນຍ, ລົງວັນທີ 15 ເມສາ 2020 ຢ່າງເຂັ້ມງວດ ແລະ ໄດ້ຮັບຜົນດີ ກໍຄືການສືບຕໍ່ຈັດຕັ້ງປະຕິບັດ ບັນດາແຈ້ງການ ຂອງກົມ ຕຳຫຼວດກວດຄົນເຂົ້າ-ອອກເມືອງ ຈົນຮອດວັນທີ **03 ພຶດສະພາ 2020**, ຄືດັ່ງນີ້:

1. ສືບຕໍ່ຈັດຕັ້ງປະຕິບັດ ແຈ້ງການ ສະບັບເລກທີ 703/ກຕມ, ລົງວັນທີ 30 ມີນາ 2020 ແລະແຈ້ງການ ເພີ່ມເຕີມ ສະບັບເລກທີ 732/ກຕມ, ລົງວັນທີ 03 ເມສາ 2020 ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງການເຂົ້າ-ອອກ ສປປ ລາວ ໃນໄລຍະການຕ້ານ ພະຍາດໂຄວິດ-19 (COVID-19);
2. ສືບຕໍ່ໂຈະຊົ່ວຄາວ ການຕໍ່ເວລາພັກເຊົາ ໃຫ້ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ແລະຈະກັບມາບໍລິການ ຕໍ່ເວລາພັກເຊົາດັ່ງກ່າວ ໃນວັນທີ **04 ພຶດສະພາ 2020. ສຳລັບຜູ້ທີ່ຢູ່ ສປປ ລາວ ເກີນກຳນົດ ນັບແຕ່ ວັນທີ 29 ມີນາ 2020 ເຖິງ 03 ພຶດສະພາ 2020** ຈະຖືກຍົກເວັ້ນການປັບໃໝ (Over Stay), ແຕ່ຈະຄິດໄລ່ ເປັນການຕໍ່ເວລາພັກເຊົາ ຍ້ອນຫຼັງ ໂດຍມີຄ່າທຳນຽມ ແລະຄ່າບໍລິການ ຕາມລະບຽບການທີ່ກຳນົດໄວ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ ໃນກໍລະນີ ມີການປ່ຽນແປງ ຈະແຈ້ງໃຫ້ຊາບຕາມພາຍຫຼັງ.

ຫົວໜ້າກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ

ກົມໃຫຍ່ສັນຕິບານ
ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ

**ສາຍສະໝອງ ສີວິໄລ**


<u>ຜູ້ປະສານງານ:</u>

ພັທ ເພັດດາວົງ ແກ້ວກັນຍາ 020 5562 6405
ພັທ ວິໄລ ເກດວາສີ 020 5544 4000
ຮທ ສຸກພານັກ ທຳມະວົງ 020 5679 6061